ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

0875 --ຜ-

ເລກທີ ...../ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 11 MAY 2020

ແຈ້ງການ

ຮຽນ : ທ່ານຜູ້ຖືຮຸ້ນ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທີ່ນັບຖື.

ເລື່ອງ : ການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ຂອງ ຜ-ຟຟລ.

- ອີງຕາມແຈ້ງການຂອງບໍລິສັດ ຜ-ຟຟລ ສະບັບເລກທີ 0814/ຜ-ຟຟລ, ລົງວັນທີ 05/05/2020 ກ່ຽວກັບ ວາລະກອງປະຊຸມ, ວັນ - ເວລາ, ສະຖານທີ່ ຈັດກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2019 ຂອງ ຜ-ຟຟລ.

ເນື່ອງຈາກສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ກຳລັງເປັນໄພຄຸກຄາມໃນທຸກໆປະເທດທົ່ວໂລກ ແລະ ການແຜ່ລະບາດມີຄວາມຮຸນແຮງຂຶ້ນເລື້ອຍໆ. ສຳລັບຢູ່ ໃນ ສປປ ລາວ ໃນໄລຍະ 01 ເດືອນກວ່າທີ່ຜ່ານມາ, ໄດ້ປະຕິບັດຕາມຄຳສັ່ງນາຍົກລັດຖະມົນຕີ ແລະ ຄຳແນະນຳຂອງຄະນະສະເພາະກິດ ແລະ ປະຕິບັດຕາມນິຕິກຳອື່ນໆ; ສາມາດຄວບຄຸມ ແລະ ຈຳກັດການແຜ່ລະບາດໄວ້ໄດ້ ໂດຍບໍ່ມີຜູ້ຕິດເຊື້ອເພີ່ມອີກ. ເຖິງຢ່າງໃດກໍຕາມ ພວກເຮົາກໍຕ້ອງໄດ້ສືບຕໍ່ມາດຕະການປ້ອງກັນ, ສະກັດກັ້ນ ແລະ ຄວບຄຸມ ເພື່ອຮັບມືການລະບາດຂອງພະຍາດດັ່ງກ່າວ.

ດັ່ງນັ້ນ, ເພື່ອເປັນການປ້ອງກັນ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດດັ່ງກ່າວ ພ້ອມທັງເປັນການສະແດງຄວາມຮັບຜິດຊອບຕໍ່ສັງຄົມໂດຍລວມ, ສ້າງຄວາມໝັ້ນໃຈແກ່ຜູ້ຖືຮຸ້ນ ແລະ ພະນັກງານ ຂອງ ຜ-ຟຟລ ໃນການເຂົ້າຮ່ວມກອງປະຊຸມສາມັນ ຜູ້ຖືຮຸ້ນປະຈຳປີ 2019 ຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໃນວັນທີ 29 ພຶດສະພາ 2020, ເວລາ 13:00 -17:00 ໂມງ, ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 1 ອາຄານສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ. ຜ-ຟຟລ ໄດ້ມີຄວາມເອົາໃຈໃສ່ ແລະ ເປັນຫ່ວງຕໍ່ຜູ້ຖືຮຸ້ນທີ່ຈະເຂົ້າມາຮ່ວມປະຊຸມ ຈຶ່ງຂໍແຈ້ງມາດຕະການ ປ້ອງກັນພະຍາດອັກເສບປອດ (COVID - 19) ມາຍັງຜູ້ຖືຮຸ້ນ ເພື່ອຈັດຕັ້ງປະຕິບັດ ດັ່ງຕໍ່ໄປນີ້ :

1. <u>ຂໍຄວາມຮ່ວມມືຜູ້ຖືຮຸ້ນມອບສັນທະໃຫ້ກຳມະການອິດສະຫຼະຂອງບໍລິສັດ ແທນການເຂົ້າຮ່ວມປະຊຸມດ້ວຍຕົນເອງ.</u>

1.1 ບໍລິສັດຂໍຄວາມຮ່ວມມືໃຫ້ປະຕິບັດຕາມຄຳແນະນຳຂອງກະຊວງສາທາລະນະສຸກ ໂດຍບໍ່ອະນຸຍາດໃຫ້ຜູ້ຖືຮຸ້ນ ຫຼື ຜູ້ຮັບມອບສັນທະຂອງຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມ ສຳລັບກໍລະນີ ດັ່ງຕໍ່ໄປນີ້ :

- ຜູ້ຖືຮຸ້ນ ຫຼື ຜູ້ຮັບມອບສັນທະທີ່ເດີນທາງໄປ ຫຼື ກັບມາຈາກປະເທດ ທີ່ມີຄວາມສ່ຽງ ຕາມການປະກາດຂອງກະຊວງສາທາລະນະສຸກ ໜ້ອຍກວ່າ 14 ວັນ ກ່ອນປະຊຸມ.
- ຜູ້ຖືຮຸ້ນ ຫຼື ຜູ້ຮັບມອບສັນທະທີ່ມີຄວາມສ່ຽງສູງ ຄືມີການຕິດຕໍ່ໃກ້ຊິດກັບບຸກຄົນທີ່ມີຄວາມສ່ຽງສູງ ຫຼື ຜູ້ມີໄຂ້ ຫຼື ມີອາການສົງໄສວ່າຈະຕິດພະຍາດອັກເສບປອດ (COVID - 19) ຫຼື ມີອາການກ່ຽວກັບລະບົບທາງເດີນຫາຍໃຈ.

1.2 ເພື່ອເປັນການປ້ອງກັນ ແລະ ຫຼຸດຄວາມສ່ຽງຈາກການແຜ່ລະບາດຂອງ ພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID - 19) ແລະ ເພື່ອສຸຂະອະນາໄມຂອງຜູ້ຖືຮຸ້ນ ຜ-ຟຟລ ຈຶ່ງຂໍຄວາມຮ່ວມມືຈາກຜູ້ຖືຮຸ້ນ ເຖິງວ່າຈະບໍ່ຢູ່ໃນກຸ່ມສ່ຽງ ຄວນມອບສັນທະໃຫ້ກຳມະການອິດສະຫຼະ ເຂົ້າປະຊຸມແທນ.

ໃນນີ້ຜູ້ຖືຮຸ້ນ ຕາມຂໍ້ 1.1 ແລະ 1.2 ສາມາດມອບສັນທະໃຫ້ກຳມະການອິດສະຫຼະເຂົ້າຮ່ວມປະຊຸມ ແລະ ອອກສຽງລົງຄະແນນ ຕາມວິທີການທີ່ໃນໜັງສືເຊີນເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ໂດຍສາມາດສົ່ງໜັງສືມອບສັນທະ ແລະ ຫຼັກຖານໃສ່ຊອງສົ່ງມາທາງໄປສະນີ ຫຼື ສາມາດສະແກນ ແລ້ວສົ່ງມາທາງ E-mail ຫຼື ທາງ ແຟັກ. ເຊິ່ງວິທີດາວໂຫຼດໜັງສືເຊີນເຂົ້າຮ່ວມກອງປະຊຸມພ້ອມເອກະສານຄັດຕິດຕ່າງໆ ມີດັ່ງລຸ່ມນີ້ :

- ທ່ານສາມາດເຂົ້າໄປດາວໂຫຼດແບບຟອມໜັງສືເຊີນກອງປະຊຸມຜູ້ຖືຮຸ້ນປະຈຳປີ 2019 ໃນເວັບໄຊທ໌ຂອງ ຕະຫຼາດຫຼັກຊັບລາວ http://www.lsx.com.la ແລະ ເວັບໄຊທ໌ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ http://www.edlgen.com.la.
- ເມື່ອທ່ານດາວໂຫຼດແບບຟອມໄດ້ແລ້ວແມ່ນໃຫ້ຂຽນແບບຟອມໃບມອບສັນທະ (Proxy) ໃຫ້ຄົບຖ້ວນ ຕາມແບບຟອມທີ່ໄດ້ລະບຸໄວ້ໃນແຕ່ລະໜ້າເຈ້ຍ. ພ້ອມທັງກ໊ອບປີ້ບັດປະຈຳຕົວ ຫຼື ພັດສະປອດ ລົງລາຍເຊັນ ແລ້ວສະແກນນຳສົ່ງໃຫ້ບໍລິສັດ ສົ່ງ ທາງ E-mail: edlgenhq@edlgen.com.la, ສົ່ງທາງ ແຟັກ ເບີ : 021 316 141 ຫຼື ສົ່ງທາງໄປສະນີ ທີ່ຕູ້ ປ.ນ 2392, ຖະໜົນມິດຕະພາບ ລາວ-ໄທ, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສ ປປ ລາວ ພາຍໃນວັນທີ 29 ພຶດສະພາ 2020.

2. <u>**ຂໍ້ແຈ້ງຊ່ອງທາງການສົ່ງຄຳຖາມລ່ວງໜ້າ :**</u> ຜູ້ຖືຮຸ້ນທີ່ມີຈຸດປະສົງ ທີ່ຈະສົ່ງຄຳຖາມລ່ວງໜ້າ ສາມາດສົ່ງຜ່ານຊ່ອງທາງ ດັ່ງນີ້ :

   ສົ່ງຄຳຖາມມາພ້ອມໜັງສືມອບສັນທະ, ເຊິ່ງຟອມມອບສັນທະໄດ້ສົ່ງໄປພ້ອມໜັງສືເຊີນປະຊຸມ ໂດຍສົ່ງມາຕາມທີ່ຢູ່ຂ້າງເທິງ ຫຼື ສົ່ງມາທີ່ E-mail : edlgenhq@edlgen.com.la

   ຫຼື ສົ່ງທາງແຟັກ ທີ່ເບີ : 021 316141.

3. <u>**ກໍລະນີຜູ້ຖືຮຸ້ນມີຈຸດປະສົງເຂົ້າຮ່ວມປະຊຸມດ້ວຍຕົນເອງ :**</u> ຜ-ຟຟລ ຂໍຄວາມຮ່ວມມື ມາຍັງຜູ້ຖືຮຸ້ນ ໃຫ້ປະຕິບັດຕາມ ແນວທາງການຈັດກອງປະຊຸມຂອງບໍລິສັດ ເພື່ອປ້ອງກັນ ແລະ ຫຼຸດຄວາມສ່ຽງ ຕໍ່ການແຜ່ລະບາດ ຂອງພະຍາດອັກເສບປອດ (COVID - 19) ດັ່ງລຸ່ມນີ້:

   3.1 ຜ-ຟຟລ ຈະຕັ້ງຈຸດຄັດກອງຕາມແນວທາງຂອງກະຊວງສາທາລະນະສຸກ ບໍລິເວນພື້ນທີ່ປະຊຸມ ໃນກໍລະນີທີ່ກວດພົບຜູ້ມີຄວາມສ່ຽງ ຫຼື ຜູ້ທີ່ມີອາການກ່ຽວກັບທາງເດີນຫາຍໃຈ ຜ-ຟຟລ ຂໍສະຫງວນສິດ ບໍ່ອະນຸຍາດໃຫ້ຜູ້ຖືຮຸ້ນ ຫຼື ຜູ້ຮັບມອບສັນທະຂອງຜູ້ຖືຮຸ້ນທີ່ມີຄວາມສ່ຽງດັ່ງກ່າວເຂົ້າໄປໃນຫ້ອງປະຊຸມ. ພ້ອມນີ້ ບໍລິສັດ ຈະຈັດລະບຽບຈຸດຄັດກອງ, ຈຸດກວດເອກະສານ, ຈຸດລົງທະບຽນ ໂດຍໃຫ້ຜູ້ຖືຮຸ້ນ ຫຼື ຜູ້ຮັບມອບສັນທະ ເວັ້ນໄລຍະຫ່າງຢ່າງໜ່ອຍປະມານ 1 ແມັດ ໃນລະຫວ່າງຕໍ່ແຖວລໍຖ້າການລົງທະບຽນ.

   3.2 ຜູ້ເຂົ້າຮ່ວມປະຊຸມຈະຖືກເຊີນໃຫ້ນັ່ງໂດຍມີໄລຍະຫ່າງທາງສັງຄົມ (Social Distancing) ທີ່ເໝາະສົມ ໂດຍມີໄລຍະຫ່າງລະຫວ່າງຕັ່ງນັ່ງ ຢ່າງໜ້ອຍປະມານ 1.5 ແມັດ ເຊິ່ງຈະເຮັດໃຫ້ຈຳນວນຕັ່ງນັ່ງໃນຫ້ອງປະຊຸມ ຫຼຸດລົງ ແລະ ຫ້າມຜູ້ເຂົ້າຮ່ວມປະຊຸມຍ້າຍ ຫຼື ເຄື່ອນທີ່ຕັ່ງນັ່ງທີ່ຈັດໃຫ້ເດັດຂາດ ແລະ ຂໍຄວາມຮ່ວມມືຜູ້ເຂົ້າຮ່ວມກອງປະຊຸມກຽມຜ້າອັດປາກອະນາໄມ ແລະ ໃສ່ຕະຫຼອດເວລາທີ່ເຂົ້າຮ່ວມການປະຊຸມ.

3.3 ຜ-ຟຟລ ຈະງົດຈັດຊຸ້ມອາຫານຫວ່າງ, ງົດເສີບຊາ, ກາເຟ ແລະ ງົດຮັບປະທານອາຫານໃນບໍລິເວນຈັດປະຊຸມ ຢ່າງເດັດຂາດ ເພື່ອຫຼຸດຄວາມສ່ຽງຂອງການແຜ່ກະຈາຍຂອງ ພະຍາດອັກເສບປອດ (COVID - 19). ນອກ ຈາກນີ້ ຜ-ຟຟລ ຈະງົດແຈກປຶ້ມລາຍງານປະຈຳປີ 2018 ແລະ ຂອງທີ່ລະນຶກຕ່າງໆ ເພື່ອຫຼຸດຜ່ອນການສຳຜັດ ກັບສິ່ງຂອງຮ່ວມກັບຜູ້ອື່ນ ແລະ ເພື່ອຄວາມປອດໄພ ສຸຂະອະນາໄມ ຂອງຜູ້ເຂົ້າຮ່ວມກອງປະຊຸມທຸກທ່ານ.

3.4 ຜູ້ເຂົ້າຮ່ວມປະຊຸມຈະຕ້ອງປະກອບເອກະສານແບບສອບຖາມ ເພື່ອຄັດກອງ ພະຍາດອັກເສບປອດຈາກເຊື້ອຈຸ ລະໂລກສາຍພັນໃໝ່ (COVID - 19) ແລະ ນຳສິ່ງໃຫ້ແກ່ພະນັກງານກວດກາເອກະສານ.

ຖ້າຫາກມີຜູ້ຮ່ວມປະຊຸມເປັນຈຳນວນຫຼາຍ ຫຼື ມາພ້ອມກັນຫຼາຍທ່ານ ອາດເຮັດໃຫ້ເກີດຄວາມລ້າຊ້າໃນການ ຄັດກອງ ແລະ ການລົງທະບຽນເຂົ້າຮ່ວມປະຊຸມ ຜ-ຟຟລ ຕ້ອງຂໍອະໄພໃນຄວາມບໍ່ສະດວກມາໃນໂອກາດນີ້ດ້ວຍ.

ຮຽນມາຍັງທ່ານເພື່ອຊາບ ແລະ ໃຫ້ຄວາມຮ່ວມມືຕາມທາງຄວນດ້ວຍ.

ດ້ວຍຄວາມນັບຖືຢ່າງສູງ,

ຜູ້ອຳນວຍການໃຫຍ່

ພະລັງງານ ແລະ ບໍ່ແຮ່ ບໍລິສັດ ພະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company ວຽງຈັນ

ລັດຕະນາ ປະທຸມວັນ

ແບບຟອມຄັດກອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19)

ກ່ອນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ໃນວັນທີ 29 ພຶດສະພາ 2020

ທີ່ຫ້ອງປະຊຸມຊັ້ນ 1 ສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ

COVID-19 Screening Form

Before attending to Annual General Meeting of Shareholders 2019 on May 29th, 2020

At Eletricite Du Laos building, Meeting room 1st floor

ຂໍຄວາມຮ່ວມມືທ່ານໃຫ້ຂໍ້ມູນທີ່ຖືກຕ້ອງຕາມຄວາມຈິງ ເປັນປະໂຫຍດໃນການປ້ອງກັນການແຜ່ລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19)

We need your help in providing the most aacurate and truthful medical statement for effective prevention of the spreading of the disease.

ຊື່ ແລະ ນາມສະກຸນ (Name and Surname).....

ເບີໂທລະສັບ (Mobile Phone Number).....

1. ທ່ານມີໄຂ້ ≥ 37.5 °C ຫຼື ບໍ່ ? Do you have a fever ? (≥ 37.5°C) ແມ່ນ (Yes) ☐ ບໍ່ແມ່ນ (No) ☐
2. ທ່ານມີອາການດັ່ງຕໍ່ໄປນີ້ ຫຼື ບໍ່ ? Do you have any of these symtoms ?

ໄອ (Cough)	ແມ່ນ (Yes) ☐	ບໍ່ແມ່ນ (No) ☐
ເຈັບຄໍ (Sore throats)	ແມ່ນ (Yes) ☐	ບໍ່ແມ່ນ (No) ☐
ນ້ຳມູກໄຫຼ (Runny nose)	ແມ່ນ (Yes) ☐	ບໍ່ແມ່ນ (No) ☐
ເມື່ອຍຫອບ (Shortness of breath)	ແມ່ນ (Yes) ☐	ບໍ່ແມ່ນ (No) ☐

3. ທ່ານມີປະຫວັດເດີນທາງມາຈາກປະເທດ ຫຼື ມາຈາກພື້ນທີ່ ທີ່ມີການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ໃນ 14 ວັນ ທີ່ຜ່ານມາ ຫຼື ບໍ່ ?

   Have you traveled / transited from any countries except Laos or area with COVID-19 outbreak within the past 14 days ?

   ແມ່ນ (Yes) ☐ ມາຈາກປະເທດ/ພື້ນທີ່ (I have travel to) :.....

   ບໍ່ແມ່ນ (No) ☐
4. ທ່ານມີປະຫວັດສຳຜັດໃກ້ຊິດກັບຜູ້ປ່ວຍທີ່ຕ້ອງສົງໄສຕິດພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ຫຼື ບໍ່ ?

   Have you been in physical contact with suspected COVID - 19 patient ?

   ແມ່ນ (Yes) ☐

   ບໍ່ແມ່ນ (No) ☐

ໝາຍເຫດ : ຖ້າຫາກທ່ານມີໄຂ້ 37.5 °C ຫຼື ມີອາການຢ່າງໃດຢ່າງໜຶ່ງຕາມທີ່ລະບຸໄວ້ ຫຼື ມີປະຫວັດເດີນທາງມາຈາກຕ່າງປະເທດ ຫຼື ພື້ນທີ່ ທີ່ມີການລະບາດຂອງພະຍາດ COVID-19 ຫຼື ມີປະຫວັດສຳຜັດໃກ້ຊິດກັບຜູ້ປ່ວຍທີ່ຕ້ອງສົງໄສຕິດພະຍາດ COVID-19 ຜ-ຟຟລ ຂໍໃຫ້ທ່ານມອບສັນທະໃຫ້ແກ່ກຳມະການອິດສະຫຼະຂອງບໍລິສັດ ດ້ວຍການປະກອບແບບຟອມໜັງສືມອບສັນທະ ໃຫ້ແກ່ພະນັກງານກວດກາເອກະສານ ແທນການເຂົ້າຮ່ວມກອງປະຊຸມ ແລະ ເດີນທາງກັບ ພ້ອມທັງປະຕິບັດຕາມຄຳແນະນຳຂອງກະຊວງສາທາລະນະສຸກ.

If you have fever (37.5 °C) ; or any symtoms wich indicates above ; or traveld / transited from any countries or the COVID-19 outbreak areas ; or have been in contact with suspected COVID-19 patiants, EDL-Gen would like to kidly ask for your cooperation in giving proxy to an independent director to attend the meeting on your behalf, by filling the proxy Form and submit to EDL-Gen staff. Then you may then return safely to your residence and follow the guideline of the Ministry of Public Health, Laos.